ສຳເນົາເອກະສານໃບສະໝັກຂໍການຊ່ວຍເຫຼືອດ້ານການເງິນຟຣີ, ນະໂຍບາຍການຊ່ວຍເຫຼືອດ້ານການເງິນ, ລວມພາສາອື່ນໆ, ແລະ ນະໂຍບາຍການອອກໃບບິນ ແລະ ການຮຽກເກັບເງິນ ແມ່ນມີເປັນພາສາ ອັງກິດ, ສະເປນ, ແລະ ພາສາອື່ນໆທີ່ມີຕາມເງື່ອນໄຂທີ່ລະບຸຢູ່ໃນນະໂຍບາຍການຊ່ວຍເຫຼືອດ້ານການເງິນ ໂດຍ:

- ຕິດຕໍ່ຫາ ພະແນກລົງທະບຽນ/ຮັບຄົນເຈັບຂອງໂຮງໝໍ
- ໂທ +1 713.338.5502 ຫຼື +1 1.800.526.2121, ຕໍ່ 5
- ຂໍໃບສະໝັກທາງໄປສະນີ:
  909 Frostwood
  Attn: PBS Financial Assistance
  Houston, TX 77024
- ດາວໂລດໃບສະໝັກຈາກ ເວັບໄຊທ໌ຂອງ ລະບົບສຸຂະພາບເມໂມຣຽວເຮີແມນ : http://www.memorialhermann.org/financialassistanceprogram/

## ລະບົບສຸຂະພາບເມໂມຣຽວເຮີແມນ

ເພື່ອຢາກກວດເບິ່ງວ່າ ທ່ານມີຄຸນສົມບັດເໝາະສົມໄດ້ຮັບການຊ່ວຍເຫຼືອດ້ານການເງິນ, ເມດິເຄດ (Medicaid), ເມດິແຄຣ໌ (Medicare), ຫຼື ໂຄງການອື່ນຫຼືບໍ່, ແລະ ຕ້ອງການຄວາມຊ່ວຍເຫຼືອໃນການສະໝັກແບບມີຄວາມລັບໂດຍບໍ່ເສຍຄ່າ, ຈົ່ງຕິດຕໍ່ຫາ:

**ພະແນກບໍລິການດ້ານທຸລະກິດໃຫ້ຄົນເຈັບ**
**(Patient Business Services)**
909 Frostwood Dr., Suite 3:100
Houston, TX 77024
Attention: PBS Financial Assistance

ໝາຍເລກໂທລະສັບ: +1 713.338.5502 ຫຼື
+1 1.800.526.2121, ຕໍ່ 5
ອີເມວ໌: Patient.Billing@memorialhermann.org

ວັນສຸກ: 8 ໂມງເຊົ້າ 5 ໂມງແລງ
ວັນຈັນ  ວັນພະຫັດ: 8 ໂມງເຊົ້າ  7 ໂມງແລງ

ວັນທີອອກເອກະສານ: 14 ພະຈິກ 2017

MEMORIAL HERMANN

4411107L

# ລວມການຊ່ວຍເຫຼືອດ້ານການເງິນໃຫ້ແກ່ຄົນເຈັບ

## ລວມພາສາອື່ນໆ



ຄຳຖາມທີ່ມັກຖາມ ແລະ ຄຳຕອບ:

- ຄຸ້ມຄອງບໍລິການໃດແດ່?
- ຂ້ອຍຈະສະໝັກຂໍການຊ່ວຍເຫຼືອໄດ້ແນວໃດ?
- ແມ່ນໃຜແດ່ທີ່ເໝາະສົມໄດ້ຮັບການຊ່ວຍເຫຼືອ?
- ຂີດຈຳກັດຂອງລາຍໄດ້ມີຫຍັງແດ່?
- ຈະເປັນແນວໃດ ຖ້າຂ້ອຍບໍ່ໄດ້ຕາມຂີດຈຳກັດຂອງລາຍໄດ້?
- ຂ້ອຍສາມາດເອົາໃບສະໝັກໄດ້ຈາກໃສ?

MEMORIAL HERMANN

# ນະໂຍບາຍການຊ່ວຍເຫຼືອດ້ານການເງິນ (FAP)

ລະບົບສຸຂະພາບເມໂມຣຽວເຮີແມນ ສະເໜີການຊ່ວຍເຫຼືອດ້ານການເງິນໃຫ້ຄົນເຈັບທີ່ມີຄວາມເໝາະສົມໄດ້ຮັບ ໂດຍອີງໃສ່ລາຍໄດ້, ຈຳນວນຄົນໃນຄອບຄົວ ແລະ ລະດັບຄວາມທຸກຍາກ (ຂອງຣັດຖະບານກາງ Poverty Level) ເພື່ອຮັບສ່ວນຫຼຸດບາງສ່ວນ ຫຼື ທັງໝົດ ຫຼື ການດູແລຈາກໂຮງໝໍທີ່ມີຄວາມຈຳເປັນທາງດ້ານສຸຂະພາບ. ຄົນເຈັບທີ່ຕ້ອງການຄວາມຊ່ວຍເຫຼືອດ້ານການເງິນຕ້ອງສະໝັກຂໍໂຄງການ, ຊຶ່ງ ໄດ້ສັງລວມຢູ່ໃນເອກະສານນີ້.

## ມີບໍລິການໃດແດ່ທີ່ໄດ້ຮັບການຄຸ້ມຄອງ?

ນະໂຍບາຍຊ່ວຍເຫຼືອດ້ານການເງິນ (FAP, The Financial Assistance Policy) ຄຸ້ມຄອງ ເຫດສຸກເສີນ ແລະ ບໍລິການທີ່ມີຄວາມຈຳເປັນດ້ານການດູແລສຸຂະພາບ ມີໃຫ້ຢູ່ໂຮງໝໍເມເມີຣຽວເຮີແມນ (Memorial Hermann Hospital).

ນະໂຍບາຍການຊ່ວຍເຫຼືອດ້ານການເງິນ ບໍ່ໄດ້ຄຸ້ມຄອງ: ຂະບວນການດຳເນີນການກ່ຽວກັບຄວາມສວຍງາມ, ການບໍລິການຕ່າງໆຂອງ ແພດ ແລະ ຜູ້ຈັດຫາອື່ນໆທີ່ປິ່ນປົວຢູ່ໃນໂຮງໝໍເມເມີຣຽວເຮີແມນ ແມ່ນບໍ່ແມ່ນຜູ່ທີ່ໂຮງໝໍຈ້າງ, ຫຼື ຜູ່ຈັດຫາທີ່ອອກໃບບິນຄ່າບໍລິການນອກໂຮງໝໍ.

## ວິທີສະໝັກ

ນະໂຍບາຍການຊ່ວຍເຫຼືອດ້ານການເງິນ ແລະ ໃບສະໝັກ ສາມາດໄປເອົາດ້ວຍຕົວເອງ, ສົ່ງທາງໄປສະນີ ແລະ ດາວໂຫລດຈາກ ເວັບໄຊທ໌ຂອງ ເມເມີຣຽວເຮີແມນ. ຂຽນໃບສະໝັກໃຫ້ຮຽບຮ້ອຍແລ້ວ, ລວມທັງ ຄັດຕິດເອກະສານຢັ້ງຢືນຕ່າງໆທີ່ຈຳເປັນ ສົ່ງໄປໃຫ້ພະແນກ ຮັບຕ້ອນ/ລົງທະບຽນຂອງໂຮງໝໍ (Hospital Admission/Registration Department) ຫຼື ທີ່ຢູ່ທີ່ມີຢູ່ດ້ານຫລັງຂອງແຜ່ນພັບນີ້.

## ຂີດຈຳກັດຂອງລາຍໄດ້

ໜຶ່ງໃນປັດໃຈທີ່ເໝາະສົມແມ່ນລາຍໄດ້ທີ່ອີງໃສ່ຕາຕະລາງລຸ່ມນີ້:

| ແນວທາງກ່ຽວກັບຄວາມທຸກຍາກ ປີ 2023 | |
|---|---|
| ບຸກຄົນທີ່ຢູ່ໃນ ຄອບຄົວ/ຄົວເຮືອນ | ລາຍໄດ້ ຕໍ່ປີ |
| 1 | $ 14,580 |
| 2 | $ 19,720 |
| 3 | $ 24,860 |
| 4 | $ 30,000 |
| 5 | $ 35,140 |
| 6 | $ 40,280 |
| 7 | $ 45,420 |
| 8 | $ 50,660 |

ສຳລັບຄອບຄົວ/ຄົວເຮືອນທີ່ມີຈຳນວນຄົນຫຼາຍກວ່າ 8 ຄົນ : ຕື່ມເງິນ $5,140 ໃສ່ແຕ່ລະຄົນ

## ແມ່ນໃຜທີ່ເໝາະສົມໄດ້ຮັບການຊ່ວຍເຫຼືອດ້ານການເງິນ?

ຈຳນວນເງິນຊ່ວຍເຫຼືອແມ່ນອີງໃສ່ ລາຍໄດ້ຂອງທ່ານ, ຈຳນວນຄົນໃນຄອບຄົວ ແລະ ລະດັບຄວາມທຸກຍາກຂອງຣັຖບານກາງ. ຄົນເຈັບທີ່ມີລາຍໄດ້ພາຍໃນຄອບຄົວ 200% ຂອງລະດັບຄວາມທຸກຍາກ ຫຼື ໜ່ອຍກວ່ານັ້ນ ອາດຈະມີສິດໄດ້ຮັບສ່ວນຫລຸດ 100%. ຄົນເຈັບທີ່ມີລາຍໄດ້ຫຼາຍກວ່າ 200% ຂອງລະດັບຄວາມທຸກຍາກຂອງຣັຖບານກາງ ອາດຈະມີສິດໄດ້ຮັບສ່ວນຫລຸດ.

ຈົ່ງເບິ່ງລາຍລະອຽດຂໍ້ມູນຢູ່ໃນນະໂຍບາຍ ທີ່ເວັບໄຊທ໌:
**http://www.memorialhermann.org/financialassistanceprogram/**

ຄົນເຈັບທີ່ມີສິດໄດ້ຮັບ ຈະບໍ່ຫັກເງິນຕື່ມອີກໃນກໍລະນີສຸກເສີນ ຫຼື ການດູແລທີ່ມີຄວາມຈຳເປັນດ້ານການດູແລສຸຂະພາບອື່ນໆ ຫຼາຍກວ່າ ຈຳນວນເງິນທີ່ອອກໃສ່ໃບບິນ (AGB, Amounts Generally Billed) ໃຫ້ແກ່ຄົນເຈັບທີ່ມີປະກັນ.

ເອກະສານຢັ້ງຢືນທີ່ມີຮູບຕໍ່ໄປນີ້ ສາມາດນຳໃຊ້ເປັນຫຼັກຖານຢັ້ງຢືນທີ່ຍອມຮັບໄດ້:

- ໃບຂັບຂີ່ ຫຼື ບັດປະຈຳຕົວ ທີ່ຣັຖເປັນຜູ່ອອກໃຫ້
- ບັດປະຈຳຕົວນັກຮຽນ
- ປັດສະປໍ (ສະຫະຣັຖ ຫຼື ຕ່າງປະເທດ)
- ເອກະສານປະກອບຄົນອົບພະຍົບຂອງສະຫະຣັຖ
- ບັດປະຈຳຕົວທີ່ອອກໃຫ້ໂດຍກົງສຸນຕ່າງປະເທດ
- ບັດເຄຣດິດ (ທີ່ມີຮູບ)